ວາລະສານການສຶກສາຄູລາວແບບຍືນຍົງ ວິທະຍາໄລຄູສາລະວັນ ປີທີ 2 ສະບັບທີ 3 (ເດືອນ ມິຖຸນາ, 2026) ໜ້າ 143 – 150
Lao Journal of Sustainable Teacher Education SALAVAN Teacher Training College, Volume 2 No 3 (June, 2026) Page 143 – 150

ISSN (Print): 0056-3080
ISSN (Online): 3107-2992

ວາລະສານການສຶກສາຄູລາວແບບຍືນຍົງ
ວິທະຍາໄລຄູສາລະວັນ
https://www.sttcjournal.edu.la
ດຳເນີນການວາລະສານໂດຍ ວິທະຍາໄລຄູສາລະວັນ

# ປັດໄຈທີ່ສົ່ງຜົນຕໍ່ຜົນສຳເລັດທາງດ້ານການຮຽນຂອງນັກສຶກສາ ສາຍຄູພຸດທະສາສະໜາ - ພາສາລາວ ປີທີ 4 ສົກຮຽນ 2023-2024 ຂອງ ວິທະຍາໄລຄູສົງຈຳປາສັກ

# The Factors Affecting Learning Achievement of Students in The Lao Language - Buddhist course in The 4th Year At Buddhist Teacher Training College Academic Year 2023-2024

ຄຳໃບ ແກ້ວສະຫວ່າງ[1] ແລະ ຈຳລອງ ມະຫາໄຊ[2]
Khambai KEOSAVANG[1] & Chamlong MAHASAI[2]

## ບົດຄັດຫຍໍ້

ຈຸດປະສົງ ເພື່ອສຶກສາລະດັບຜົນສຳເລັດທາງດ້ານການຮຽນຂອງນັກສຶກສາ ສາຍຄູພຸດທະສາສະໜາ-ພາສາລາວ ປີທີ 4 ຂອງ ວິທະຍາໄລຄູສົງຈຳປາສັກ ສົກຮຽນ 2023-2024, ການວິໄຈຄັ້ງນີ້ເປັນການວິໄຈຮູບແບບສຳຫຼວດ ກຸ່ມຕົວຢ່າງໃນການວິໄຈຄັ້ງນີ້ໄດ້ມາໂດຍການເລືອກແບບເຈາະຈົງ ໄດ້ແກ່ ນັກສຶກສາພຸດທະສາສະໜາປີທີ 4 ຈຳນວນ 16 ອົງ, ເຄື່ອງມືຄົ້ນຄວ້າແມ່ນແບບສອບຖາມລະດັບການໃຫ້ຄະແນນ 5 ລະດັບ, ວິທີການທາງສະຖິຕິທີ່ໃຊ້ເພື່ອວິເຄາະຂໍ້ມູນລວມມີຄວາມຖີ່, ອັດຕາສ່ວນ, ຄ່າສະເລ່ຍ, ແລະ ຄ່າຜັນປ່ຽນມາດຕະຖານ.

**ຜົນການຄົ້ນຄວ້າ** ພົບວ່າ ປັດໄຈທີ່ສົ່ງຜົນຕໍ່ຜົນສຳເລັດທາງດ້ານການຮຽນໂດຍລວມໃນທັງສີ່ດ້ານແມ່ນຢູ່ໃນລະດັບດີ ($\mu$ = 3.47), ເມື່ອພິຈາລະນາແຕ່ລະດ້ານເຫັນວ່າ: ດ້ານປັດໄຈທີ່ກ່ຽວຂ້ອງກັບຄູສອນມີຄ່າສະເລ່ຍສູງສຸດ ($\mu$ = 3.55), ຕາມດ້ວຍປັດໄຈຂອງນັກສຶກສາ ($\mu$ = 3.52), ປັດໄຈຄອບຄົວ ($\mu$ = 3.45), ແລະ ປັດໄຈສະພາບແວດລ້ອມຂອງວິທະຍາໄລມີຄ່າສະເລ່ຍຕ່ຳສຸດ ($\mu$ = 3.35) ຕາມລຳດັບ. ເຖິງຢ່າງໃດກໍ່ຕາມ, ປັດໄຈສະພາບແວດລ້ອມຂອງຄອບຄົວ ແລະ ວິທະຍາໄລຍັງຕ້ອງການປັບປຸງ, ໂດຍສະເພາະແມ່ນການສະໜັບສະໜູນທາງດ້ານການເງິນຈາກຄອບຄົວ ແລະ ຄວາມພຽງພໍຂອງການເຂົ້າເຖິງອິນເຕີເນັດພາຍໃນວິທະຍາໄລ.

**ຄຳສັບສຳຄັນ:** ຜົນສຳເລັດທາງວິຊາການ, ນັກສຶກສາຄູສອນພາສາພຸດທະສາສະໜາ-ລາວ, ວິທະຍາໄລຄູສອນພຸດທະສາສະໜາຈຳປາສັກ

[1] ພະແນກຈັດຕັ້ງ, ກວດກາ ແລະ ປະກັນຄຸນນະພາບ ວິທະຍາໄລຄູສົງຈຳປາສັກ/ ສປປ ລາວ.
[2] ວິທະຍາໄລຄູສົງຈຳປາສັກ
Corresponding Author: khambai KEOSAVANG, Email: khambay83@gmail.come, Tel: 02058 999 657

## Abstract

Objective To study the level of academic achievement of 4th year Buddhist-Lao language teachers of Champasak Teachers College in the 2023-2024 academic year, this research is survey research. The sample group in this research was selected by purposeful selection of 16 4th year Buddhist students. The research instrument was a 5-level rating scale questionnaire. The statistical methods used to analyze the data included frequency, proportion, mean, and standard deviation.

The research results found that the factors affecting overall academic achievement in all four aspects were at a good level ($\mu$ = 3.47). When considering each aspect, it was found that: the factor related to the teacher had the highest average value ($\mu$ = 3.55), followed by the student factor ($\mu$ = 3.52), the family factor ($\mu$ = 3.45), and the college environment factor had the lowest average value ($\mu$ = 3.35), respectively. However, family and college environmental factors still need to be improved, especially financial support from families and the adequacy of internet access within the college.


**Keywords:** Academic achievement, Buddhist-Lao language teacher students, Champasak Buddhist Teachers College

## ບົດນຳ

ການສຶກສາຖືກຖືວ່າເປັນປັດໄຈຫຼັກ ແລະ ສຳຄັນໃນການພັດທະນາຊັບພະຍາກອນມະນຸດຂອງປະເທດຢ່າງຕໍ່ເນື່ອງທັງດ້ານປະລິມານ ແລະ ຄຸນນະພາບ. ລະບົບການສຶກສາທີ່ມີຄຸນນະພາບຊ່ວຍໃນການປູກຝັງບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ, ແລະ ທັກສະເພື່ອການຈ້າງງານທີ່ໝັ້ນຄົງ, ນຳໄປສູ່ການບັນລຸເປົ້າໝາຍການພັດທະນາແຫ່ງຊາດໃນທຸກດ້ານ (ກະຊວງສຶກສາທິການ ແລະ ກິລາ, 2015). ນອກຈາກນັ້ນ, ການສຶກສາແມ່ນຂະບວນການທີ່ສຳຄັນທີ່ແນໃສ່ການພັດທະນາບຸກຄົນທີ່ມີຄຸນນະພາບດ້ວຍການພັດທະນາທີ່ສົມດຸນທາງດ້ານສະຕິປັນຍາ, ຈິດໃຈ, ຮ່າງກາຍ, ແລະ ສັງຄົມ, ເພື່ອເສີມຂະຫຍາຍການເຕີບໂຕທາງເສດຖະກິດ ແລະ ສັງຄົມຂອງປະເທດ. ໂດຍສະເພາະໃນຍຸກໂລກາພິວັດທີ່ສັງຄົມມີການປ່ຽນແປງຢ່າງໄວວາ, ລະບົບການສຶກສາຕ້ອງການການປະຕິຮູບເພື່ອພັດທະນາຊາວໜຸ່ມທີ່ມີສິນທຳ, ຄວາມຮູ້, ແລະ ຄວາມສາມາດ, ແລະ ສາມາດນຳໃຊ້ໄດ້ຢ່າງມີປະສິດທິພາບໃນຊີວິດຈິງ.

ວິທະຍາໄລຄູສົງຈຳປາສັກເປັນສະຖາບັນຝຶກອົບຮົມຄູພາຍໃຕ້ການຊີ້ນຳຂອງກົມຝຶກອົບຮົມຄູ, ກະຊວງສຶກສາທິການ ແລະ ກິລາ. ພາລະກິດຂອງມັນແມ່ນການຜະລິດ ແລະ ພັດທະນາຄູສອນມັດທະຍົມຕອນປາຍໃນລະດັບປະລິນຍາຕີທີ່ມີຄຸນວຸດທິ, ຄວາມຮູ້, ແລະ ຄວາມສາມາດທີ່ເປັນປັດໄຈສຳຄັນໃນການພັດທະນາຊັບພະຍາກອນມະນຸດເພື່ອຕອບສະໜອງຄວາມຕ້ອງການຂອງການພັດທະນາເສດຖະກິດ ແລະ ສັງຄົມຂອງປະເທດຊາດ ແລະເພື່ອຕອບສະໜອງຄວາມຕ້ອງການໂດຍລວມຂອງບຸກຄະລາກອນການສຶກສາໃນປະເທດ.

ຜົນສຳເລັດທາງວິຊາການຂອງນັກຮຽນເປັນຕົວຊີ້ບອກທີ່ສຳຄັນຂອງຄຸນນະພາບຂອງການຄຸ້ມຄອງການສຶກສາເຊິ່ງໄດ້ຮັບອິດທິພົນຈາກຫຼາຍປັດໄຈ, ລວມທັງປັດໄຈຂອງນັກຮຽນ, ປັດໄຈຄອບຄົວ, ປັດໄຈການສອນ, ແລະ ປັດໄຈສະພາບແວດລ້ອມການຮຽນຮູ້. ການສຶກສາປັດໄຈເຫຼົ່ານີ້ຢ່າງເປັນລະບົບຈະຊ່ວຍໃຫ້ຜູ້ບໍລິຫານ ແລະ ຄະນະວິຊາວາງແຜນ ແລະ ປັບປຸງຂະບວນການສອນ ແລະ ການຮຽນຮູ້ຢ່າງມີປະສິດທິພາບ, ເຊິ່ງຈະສົ່ງຜົນໃຫ້ມີການປັບປຸງຄຸນນະພາບການສຶກສາຢ່າງຕໍ່ເນື່ອງ.

ດ້ວຍເຫດຜົນທີ່ໄດ້ກ່າວມາຂ້າງເທິງ, ການຄົ້ນຄວ້ານີ້ມີຈຸດປະສົງເພື່ອສຶກສາລະດັບຜົນສຳເລັດທາງວິຊາການຂອງນັກສຶກສາປີທີ 4 ຈຳນວນ 16 ຄົນ ໃນໂຄງການສຶກສາພູດທະສາສະໜາ-ພາສາລາວ ທີ່ວິທະຍາໄລຄູສົງຈຳປາສັກ, ຈຳປາສັກ, ໃນລະຫວ່າງປີການສຶກສາ 2023-2024. ຜົນຂອງການຄົ້ນຄວ້ານີ້ຈະເປັນປະໂຫຍດຕໍ່ຜູ້ບໍລິຫານ, ອາຈານ, ແລະ ຜູ້ມີສ່ວນຮ່ວມໃນການໃຫ້ແນວທາງໃນການພັດທະນາ ແລະ ປັບປຸງຄຸນນະພາບ ແລະ ປະສິດທິພາບຂອງວຽກງານວິຊາການຂອງວິທະຍາໄລ, ໃນທີ່ສຸດກໍ່ຈະເປັນປະໂຫຍດຕໍ່ນັກສຶກສາ ແລະ ສັງຄົມໂດຍລວມ.

## ຈຸດປະສົງຂອງການວິໄຈ

ເພື່ອສຶກສາລະດັບຜົນສຳເລັດທາງດ້ານການຮຽນຂອງນັກສຶກສາ ສາຍຄູພຸດທະສາສະໜາ-ພາສາລາວປີທີ 4 ຂອງ ວິທະຍາໄລຄູສົງຈຳປາສັກ ສົກຮຽນ 2023-2024.

## ວິທີດຳເນີນການວິໄຈ

ການວິໄຈຄັ້ງນີ້ແບບສຳຫຼວດຄວາມຄິດເຫັນ ຂອງນັກສຶກສາ ສາຍຄູພຸດທະສາສະໜາ-ພາສາລາວປີທີ 4 ປະຈຳສົກຮຽນ 2023-2024 ລວມປະຊາກອນທັງໝົດ 16 ອົງ/ທ່ານ. ໂດຍມີວິທີດຳເນີນການວິໄຈດັ່ງນີ້:

ປະຊາກອນທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່: : ນັກສຶກສາ ສາຍຄູພຸດທະສາສະໜາ-ພາສາລາວປີທີ 4 ປະຈຳສົກຮຽນ 2023-2024 ລວມປະຊາກອນທັງໝົດ 16 ອົງ/ທ່ານ.

ເນື່ອງຈາກວ່າປະຊາກອນມີຈຳນວນໜ້ອຍ ສະນັ້ນ, ຜູ້ວິໄຈຈຶ່ງໄດ້ກຸ່ມຕົວຢ່າງມາໂດຍການເລືອກເອົາປະຊາກອນທັງໝົດ ໄດ້ແກ່ ນັກສຶກສາພຸດທະສາສະໜາປີທີ 4 ຈຳນວນ 16 ອົງ, ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນແບບສອບຖາມແບບປາຍເປີດທີ່ສ້າງຂຶ້ນຈາກການສຶກສາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

- ແມ່ນເພື່ອສຶກສາລະດັບຜົນສຳເດັດທາງດ້ານການຮຽນຂອງນັກສຶກສາ ສາຍຄູພຸດທະສາສະໜາ-ພາສາລາວປີທີ 4 ຂອງ ວິທະຍາໄລຄູສົງຈຳປາສັກ.

ເຊິ່ງແບ່ງອອກເປັນ 2 ຂັ້ນຕອນດັ່ງນີ້:

ຕອນທີ 1 ເປັນແບບສອບຖາມກ່ຽວກັບສະຖານະພາບທົ່ວໄປຂອງຜູ້ຕອບແບບສອບຖາມໄດ້ແກ່ ເພດ ແລະ ອາຍຸ.

ຕອນທີ 2 ເປັນແບບສອບຖາມເປັນແບບມາດຕາສ່ວນປະມານຄ່າ (Rating scale) ກ່ຽວປັດໃຈທີ່ສົ່ງຜົນຕໍ່ລະດັບຜົນການຮຽນຂອງນັກສຶກສາສາຍຄູພຸດທະສາສະໜາ-ພາສາລາວ ປີທີ 4 ໂດຍຜູ້ວິໄຈໄດ້ແບ່ງມາດຕາສ່ວນຄວາມຄິດເຫັນ ຂອງຄະແນນ ອອກເປັນ 5 ລະດັບ ໂດຍໃຊ້ເກນພິຈາລະນາ ແຕ່ລະລະດັບ ເພື່ອວັດລະດັບຄວາມຄິດເຫັນ ໂດຍກຳນົດຄະແນນຈາກ 5 (ດີຫຼາຍ) ຫາ 1 (ອ່ອນຫຼາຍ) ແລະ ກຳນົດເກນການແປຜົນຕາມຊ່ວງຄ່າສະເລ່ຍ (ທິດາສະນິກ ວົງພິທັກ , 2563)

ໃນການສ້າງແບບສອບຖາມຄັ້ງນີ້: ຜູ້ວິໄຈໄດ້ສຶກສາແນວຄິດທິດສະດີ ແລະ ງານວິໄຈທີ່ກ່ຽວຂ້ອງເພື່ອໃຫ້ຄວບຄຸມຕາມວັດຖຸປະສົງຂອງການວິໄຈ.

- ນຳແບບສອບຖາມທີ່ສ້າງຂຶ້ນມານຳສະເໜີໃຫ້ຄູທີ່ປຶກສາເພື່ອກວດສອບທາງດ້ານເນື້ອຫາ,ໃຫ້ຄຳແນະແນວ
- ຜູ້ວິໄຈນຳເອົາແບບສອບຖາມທີ່ໄດ້ຈາກການໃຫ້ຄຳແນະນຳຂອງຄູທີ່ປຶກສາມາໄປປັບປຸງ ແກ້ໄຂຕາມຄຳແນະນຳຂອງຄູທີ່ປຶກສາ,
- ນຳເອົາແບບສອບຖາມທີ່ໄດ້ນັ້ນມາໃຫ້ຜູ້ຊ່ຽວຊານກວດຄວາມສອດຄ່ອງ (IOC) ທາງດ້ານນິຍາມສັບ;

- ແລ້ວນຳເອົາແບບສອບຖາມທີ່ຜ່ານການກວດຄວາມສອດຄ່ອງທາງດ້ານນິຍາມສັບ ແລະ ນຳແບບສອບຖາມມາຄິດໄລ່ຄວາມສອດຄ່ອງຂອງແຕ່ລະຂໍ້ທີ່ມີຄ່າສະເລ່ຍແຕ່ 0.5 ຂຶ້ນໄປ ນຳມາເປັນຄຳຖາມສະບັບສົມບູນ
- ແລະ ນຳເອົາແບບສອບຖາມທີ່ຖືກຕ້ອງ ແລະ ສົມບູນໄປຈັດພິມເພື່ອກະກຽມເກັບຂໍ້ມູນຕາມກຳນົດຂອງກຸ່ມຕົວຢ່າງ.

**ການເກັບກຳຂໍ້ມູນ** ດຳເນີນການໂດຍຂໍອະນຸຍາດຈາກຫົວໜ້າສະຖາບັນ ແລະ ນຳແບບສອບຖາມໄປເກັບຂໍ້ມູນຈາກກຸ່ມຕົວຢ່າງດ້ວຍຕົນເອງ ຈາກນັ້ນໄດ້ກວດສອບ ແລະ ຄັດເລືອກແບບສອບຖາມທີ່ສົມບູນເພື່ອນຳໄປວິເຄາະ

ສຳລັບການວິເຄາະຂໍ້ມູນ ຜູ້ວິໄຈໄດ້ນຳໃຊ້ສະຖິຕິພື້ນຖານ ປະກອບມີ ຄ່າຄວາມຖີ່ ຄ່າສ່ວນຮ້ອຍ ຄ່າສະເລ່ຍ ແລະ ຄ່າສ່ວນບ່ຽງເບນມາດຕະຖານ Best & Kahn (2006) ໂດຍມີສູດຄຳນວນດັ່ງນີ້

$$P = \frac{f}{n} \times 100$$

$P$ : ຄ່າສ່ວຍຮ້ອຍ (%)

$f$ : ຄ່າຄວາມຖີ່

$n$ : ຈຳນວນຂໍ້ມູນທັງໝົດ

$$\mu = \frac{\sum X}{N}$$

$$\sigma = \sqrt{\frac{\sum (X-\mu)^2}{N}}$$

$\sigma$ ແທນຄ່າສ່ວນບ່ຽງເບນມາດຖານ

$X$ ແທນຄະແນນທົດສອບ

$\mu$ ແທນຄ່າສະເລ່ຍ

$N$ ແທນຈຳນວນປະຊາກອນ

ໂດຍຜົນການວິເຄາະຈະນຳມາແປຜົນຕາມເກນຄ່າສະເລ່ຍທີ່ກຳນົດໄວ້

## ຜົນການວິໄຈ ແລະ ອະພິປາຍຜົນ

### ຜົນການວິໄຈ

ການວິໄຈ, "ປັດໄຈທີ່ສົ່ງຜົນຕໍ່ຜົນສຳເລັດທາງດ້ານການຮຽນຂອງນັກສຶກສາ ສາຍຄູພູດທະສາສະໜາ - ພາສາລາວ ປີທີ 4 ສົກຮຽນ 2023-2024 ຂອງ ວິທະຍາໄລຄູສົງຈຳປາສັກ" ມີຈຸດປະສົງເພື່ອສຶກສາລະດັບຜົນສຳເລັດທາງດ້ານການຮຽນຂອງນັກສຶກສາ ສາຍຄູພຸດທະສາສະໜາ-ພາສາລາວປີທີ 4 ກຸ່ມຕົວຢ່າງປະກອບດ້ວຍ 16 ອົງ

1) ຜົນການວິເຄາະຂໍ້ມູນກ່ຽວກັບຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ ດ້ານສະຖານະພາບ ເຫັນວ່າ

ຜູ້ຕອບແບບສອບຖາມທັງໝົດມີ 16 ອົງ/ທ່ານ, ເປັນພຣະສົງ 12 ອົງ, ຄິດເປັນສ່ວນຮ້ອຍເທົ່າ 75%, ເປັນສຳມະເນນ 4 ອົງ, ຄິດເປັນສ່ວນຮ້ອຍເທົ່າ 25%, ເປັນຄາລະວາດ 0 ທ່ານ, ຄິດເປັນສ່ວນເທົ່າ 00 %.

ຜົນການວິເຄາະຂໍ້ມູນກ່ຽວກັບຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ ດ້ານອາຍຸ ເຫັນວ່າຜູ້ຕອບແບບສອບຖາມທັງໝົດມີ 16 ອົງ/ທ່ານ, ມີອາຍຸແຕ່ 11-15 ປີ ຈຳນວນ 0 ອົງ/ທ່ານ, ຄິດເປັນສ່ວນເທົ່າ 00% ,ມີອາຍຸແຕ່16-20 ປີ ມີຈຳນວນ 6 ອົງ/ທ່ານ, ຄິດເປັນສ່ວນເທົ່າ 37.5 %, ມີອາຍຸແຕ່ 21 ປີ ຂຶ້ນໄປຈຳນວນ 10 ອົງ/ທ່ານ, ຄິດເປັນສ່ວນເທົ່າ 62.5%.

**2)** ຜົນການວິໄຈກ່ຽວກັບ ລະດັບຜົນສຳເດັດທາງການຮຽນ ຂອງນັກສຶກສາສາຍຄູພຸດທະສາສະໜາ-ພາສາລາວ ປີທີ 4 ຂອງ ວິທະຍາໄລຄູສົງ ຈຳປາສັກ ປະຈຳປີ 2023-2024 ໂດຍລວມທັງສີ່ດ້ານແມ່ນເຫັນວ່າຢູ່ໃນລະດັບດີມີຄ່າສະເລ່ຍແມ່ນ $\mu = 3.47$ ເມື່ອເບິ່ງແຕ່ລະດ້ານເຫັນວ່າ: ດ້ານທີ່ມີຄ່າສະເລ່ຍສູງສຸດໄດ້ແກ່ ປັດໃຈດ້ານອາຈານສອນ ມີຄ່າສະເລ່ຍເທົ່າກັບ $\mu = 3.55$ ແລະ ຮອງລົງມາແມ່ນ ປັດໃຈດ້ານຜູ້ຮຽນ ມີຄ່າສະເລ່ຍແມ່ນ $\mu =3.52$, ປັດໃຈດ້ານຄອບຄົວ ມີຄ່າສະເລ່ຍແມ່ນ $\mu = 3.45$ ແລະ ດ້ານທີ່ມີຄ່າສະເລ່ຍຕ່ຳສຸດໄດ້ແກ່ ປັດໃຈດ້ານສະພາບແວດລ້ອມໃນວິທະຍາໄລມີຄ່າສະເລ່ຍແມ່ນ $\mu =3.35$ ຕາມລຳດັບ.

ປັດໃຈດ້ານຜູ້ຮຽນ ໂດຍພາບລວມແມ່ນຢູ່ໃນລະດັບດີ ມີຄ່າສະເລ່ຍແມ່ນ $\mu =3.52$ ເມື່ອລຽງລາດັບແຕ່ຫຼາຍຫານ້ອຍ ເຫັນວ່າຂໍ້ທີ່ມີຄ່າສະເລ່ຍສູງສຸດໄດ້ແກ່ ນັກສຶກສາຄິດວ່າກິດຈະກຳ ຫຼື ວຽກບ້ານ ທີ່ໄດ້ຮັບມອບໝາຍຈາກຄູຕາມແຕ່ລະໄລຍະເປັນສິ່ງທີ່ດີ ແລະ ນັກສຶກສາສາມາດແກ້ໄຂບັນຫາໃນເລື່ອງການຮຽນດ້ວຍຕົນເອງ ມີຄ່າສະເລ່ຍເທົ່າກັບ $\mu =3.81$, ຮອງລົງມາແມ່ນ ນັກສຶກສາຈົດຫຼືບັນທຶກເນື້ອໃນທີ່ສາຄັນທີ່ອາຈານສອນເປັນປະຈາມີຄ່າສະເລ່ຍເທົ່າກັບ $\mu =3.75$, ນັກສຶກສາເຂົ້າຮຽນທັນເວລາ ແລະ ນັກສຶກສາຈົດຫຼືບັນທຶກເນື້ອໃນທີ່ສາຄັນທີ່ອາຈານສອນເປັນປະຈຳ ມີຄ່າສະເລ່ຍເທົ່າກັບ $\mu =3.69$, ຄວາມຕ້ອງການທີ່ຈະຮຽນໃຫ້ສາເລັດພາຍໃນເວລາທີ່ວິທະຍາໄລກຳນົດ ມີຄ່າສະເລ່ຍເທົ່າກັບ $\mu =3.63$, ສາມາດທຸ້ມເທເວລາ ແລະ ຄວາມຮູ້ຄວາມສາມາດ ເພື່ອໃຫ້ມີຜົນງານ ແລະ ຜົນການຮຽນທີ່ດີ ແລະ ນັກສຶກສາສອບຖາມອາຈານເມື່ອບໍ່ເຂົ້າໃຈເນື້ອໃນວິຊາທີ່ຮຽນ ມີຄ່າສະເລ່ຍເທົ່າກັບ $\mu =3.44$, ນັກສຶກສາຄິດວ່າການນັ່ງດ້ານໜ້າໃນຫ້ອງຮຽນເຮັດໃຫ້ຕັ້ງໃຈຮຽນ ແລະ ໄດ້ຄວາມຮູ້ຫຼາຍ ມີຄ່າສະເລ່ຍເທົ່າກັບ $\mu =3.38$, ນັກສຶກສາ ຮູ້ສຶກກະຕືລືລົ້ນທີ່ຈະເຂົ້າຮຽນທຸກຄັ້ງ ມີຄ່າສະເລ່ຍເທົ່າກັບ $\mu =3.19$ ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດໄດ້ແກ່ ນັກສຶກສາມີການອະພິປາຍໃນເລື່ອງທີ່ຮຽນກັບເພື່ອນຮ່ວມຫ້ອງ ມີຄ່າສະເລ່ຍເທົ່າກັບ $\mu =3.31$ ຕາມລຳດັບ.

ປັດໃຈດ້ານຄອບຄົວ ໂດຍພາບລວມແມ່ນຢູ່ໃນລະດັບດີ ມີຄ່າສະເລ່ຍແມ່ນ $\mu =3.45$ ເມື່ອລຽງລຳດັບແຕ່ຫຼາຍຫານ້ອຍ ເຫັນວ່າຂໍ້ທີ່ມີຄ່າສະເລ່ຍສູງສຸດໄດ້ແກ່ ຄອບຄົວສະໜັບສະໜູນດ້ານການເງິນຢ່າງສະໝ່ຳສະເໝີ ເຮັດໃຫ້ນັກຮຽນມີກຳລັງໃຈ ແລະ ຕັ້ງໃຈໃນການຮຽນ ບໍ່ຕ້ອງຫາລາຍໄດ້ລະຫວ່າງຮຽນ ມີຄ່າສະເລ່ຍແມ່ນ $\mu =3.75$ ຮອງລົງມາແມ່ນ ຄອບຄົວຈະສອບຖາມ ແລະ ໃຫ້ຄວາມສົນໃຈຕິດຕາມຜົນການຮຽນຂອງນັກສຶກສາຢ່າງສະໝ່ຳສະເໝີ ມີຄ່າສະເລ່ຍແມ່ນ $\mu =3.63$, ຄອບຄົວໃຫ້ຄາປຶກສາ ແລະ ໃຫ້ກຳລັງໃຈທຸກໆດ້ານແກ່ລູກທີ່ຮຽນ ມີຄ່າສະເລ່ຍແມ່ນ $\mu =3.50$, ຄອບຄົວຍອມຮັບ ແລະ ອະນຸຍາດໃຫ້ນັກສຶກສາຕັດສິນໃຈໃນເລື່ອງການສຶກສາດ້ວຍຕົວເອງ ແລະ ຄອບຄົວເປັນແບບຢ່າງທີ່ດີໃນການດຳລົງຊີວິດໃນແຕ່ລະວັນ ມີຄ່າສະເລ່ຍແມ່ນ $\mu =3.44$, ຄອບຄົວສົ່ງເສີມເງິນງົບປະມານໃນການສ້າງກິດຈະກຳການຮຽນຮູ້ຂອງນັກສຶກສາ ມີຄ່າສະເລ່ຍແມ່ນ $\mu =3.38$ ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດໄດ້ແກ່ ຄອບຄົວເຮັດໃຫ້ນັກສຶກສາຮູ້ສຶກວ່າເປັນຄົນສຳຄັນໃນຄອບຄົວ, ຄອບຄົວມີສ່ວນຊ່ວຍໃນການຈັດຊື້ອຸປະກອນການຮຽນທີ່ຈຳເປັນເຮັດໃຫ້ນັກສຶກສານຳມາໃຊ້ປະກອບການຮຽນເພື່ອສ້າງຄວາມເຂົ້າໃຈໃນບົດຮຽນຫຼາຍຂຶ້ນ ແລະ ຄອບຄົວຈະໃຫ້ກຳລັງໃຈນັກສຶກສາເມື່ອນັກສຶກສາມີບັນຫາເລື່ອງການຮຽນເຮັດໃຫ້ນັກສຶກສາມີກຳລັງໃຈຮຽນ ມີຄ່າສະເລ່ຍແມ່ນ $\mu =3.31$ ຕາມລຳດັບ.

ປັດໃຈດ້ານອາຈານສອນໂດຍພາບລວມແມ່ນຢູ່ໃນລະດັບດີ ມີຄ່າສະເລ່ຍແມ່ນ $\mu$ =3.55 ເມື່ອລຽງລາດັບແຕ່ຫຼາຍຫານ້ອຍ ເຫັນວ່າຂໍ້ທີ່ມີຄ່າສະເລ່ຍສູງສຸດໄດ້ແກ່ ອາຈານຜູ້ສອນອະທິບາຍໃນເລື່ອງທີ່ສອນຈະແຈ້ງຊັດເຈນ ມີຄ່າສະເລ່ຍແມ່ນ $\mu$ =3.81 ຮອງລົງມາ ແມ່ນ ອາຈານຜູ້ສອນໄດ້ມີການກະກຽມຕົວກ່ອນຂຶ້ນສອນ ມີຄ່າສະເລ່ຍແມ່ນ $\mu$ =3.75, ອາຈານຜູ້ສອນໃຊ້ພາສາໃນເວລາສອນທີ່ເຂົ້າໃຈງ່າຍ ມີຄ່າສະເລ່ຍແມ່ນ $\mu$ =3.69, ອາຈານຜູ້ສອນເປີດໂອກາດໃຫ້ນັກຮຽນມີສ່ວນຮ່ວມໃນການຈັດກິດຈະກໍາ ມີຄ່າສະເລ່ຍແມ່ນ $\mu$ =3.63, ອາຈານຜູ້ສອນໄດ້ມີການແຕ່ງບົດສອນລາຍວິຊາທີ່ຕົນສອນ ມີຄ່າສະເລ່ຍແມ່ນ $\mu$ =3.56, ອາຈານຜູ້ສອນມີທັກສະໃນການຈັດອະພິປາຍເນື້ອໃນສໍາຄັນຂອງເລື່ອງທີ່ຮຽນໄດ້ເປັນຢ່າງດີ ມີຄ່າສະເລ່ຍແມ່ນ $\mu$ =3.63, ອາຈານຜູ້ສອນກະຕຸ້ນໃຫ້ນັກສຶກສາຊັກຖາມໃນຫ້ອງຮຽນ ມີຄ່າສະເລ່ຍແມ່ນ $\mu$ =3.50, ອາຈານຜູ້ສອນໄດ້ມີການຊີ້ແຈງແຜນການສອນກ່ອນການຮຽນທຸກຄັ້ງ ມີຄ່າສະເລ່ຍແມ່ນ $\mu$ =3.38, ອາຈານຜູ້ສອນເຂົ້າສອນຕົງຕໍ່ເວລາ ມີຄ່າສະເລ່ຍແມ່ນ $\mu$ =3.31 ແລະ ຂໍ້ທີ່ມີຄ່າສະເລ່ຍຕໍ່າສຸດໄດ້ແກ່ ອາຈານຜູ້ສອນມີຄວາມຮູ້ໃນວິຊາທີ່ສອນເປັນຢ່າງດີ ມີຄ່າສະເລ່ຍແມ່ນ $\mu$ =3.25 ຕາມລໍາດັບ.

ປັດໃຈດ້ານສະພາບແວດລ້ອມໃນວິທະຍາໄລ ໂດຍພາບລວມ ແມ່ນຢູ່ໃນລະດັບດີ ມີຄ່າສະເລ່ຍແມ່ນ $\mu$ =3.43 ເມື່ອລຽງລໍາດັບແຕ່ຫຼາຍຫານ້ອຍ ເຫັນວ່າຂໍ້ທີ່ມີຄ່າສະເລ່ຍສູງສຸດໄດ້ແກ່ ນັກສຶກສາມັກຄົ້ນຫາຂໍ້ມູນໃນການຮຽນທາງອິນເຕີເນັດເພາະວ່າມີຄວາມສະດວກວ່ອງໄວ ມີຄ່າສະເລ່ຍແມ່ນ $\mu$ =4.35 ຮອງລົງມາແມ່ນ ເມື່ອນັກສຶກສາບໍ່ເຂົ້າຫ້ອງຮຽນເພື່ອນຈະນໍາເອກະສານ ຫຼື ອະທິບາຍເນື້ອໃນນັ້ນໃຫ້ນັກສຶກສາໄດ້ຮຽນທັນເພື່ອນ ມີຄ່າສະເລ່ຍແມ່ນ $\mu$ =4.06, ນັກສຶກສາອ່ານໜັງສືເພື່ອເພີ່ມພູນຄວາມຮູ້ກັບເພື່ອນ ມີຄ່າສະເລ່ຍແມ່ນ $\mu$ =3.63, ຫ້ອງຮຽນ ເຊັ່ນ: ໂຕະ, ຕັ່ງ ມີພຽງພໍ ແລະ ສະພາບພ້ອມໃຊ້ງານ ແລະ ນັກສຶກສາ ແລະ ເພື່ອນຈະຮ່ວມກຸ່ມ ແລະ ທົບທວນບົດຮຽນກ່ອນສອບເສັງ ມີຄ່າສະເລ່ຍແມ່ນ $\mu$ =3.50, ເມື່ອນັກຮຽນບໍ່ເຂົ້າໃຈໃນບົດຮຽນ ເພື່ອນຈະຊ່ວຍແນະນໍາ ແລະ ອະທິບາຍໃຫ້ເຂົ້າໃຈມີຄ່າສະເລ່ຍແມ່ນ $\mu$ =3.44, ວິທະຍາໄລຈັດໃຫ້ມີລະບົບອິນເຕີເນັດທີ່ໄວໃຫ້ນັກສຶກສາໃຊ້ ແລະ ວິທະຍາໄລມີຫ້ອງຄອມພິວເຕີ, ຫ້ອງສະໝຸດ ຢ່າງພຽງພໍ ມີຄ່າສະເລ່ຍແມ່ນ $\mu$ =3.25, ວິທະຍາໄລມີອຸປະກອນອໍານວຍຄວາມສະດວກເຊັ່ນ ໂປຣເຈັກເຕີ, ຄອມພິວເຕີພຽງພໍສະພາບພ້ອມໃຊ້ງານ ແລະ ສື່ການຮຽນ-ການສອນເໝາະສົມຕໍ່ການຮຽນ-ການສອນ ແລະ ໜ້າສົນໃຈ ມີຄ່າສະເລ່ຍແມ່ນ $\mu$ =3.19, ນັກສຶກສາ ແລະ ເພື່ອນຈະແລກປ່ຽນຮຽນຮູ້ໃນເນື້ອຫາທີ່ຮຽນສະເໜີ ມີຄ່າສະເລ່ຍແມ່ນ $\mu$ =2.94 ແລະ ຂໍ້ທີ່ມີຄ່າສະເລ່ຍຕໍ່າສຸດໄດ້ແກ່ ວິທະຍາໄລມີສັນຍານອິນເຕີເນັດພຽງພໍໃນການສຶກສາຄົ້ນຄວ້າ ມີຄ່າສະເລ່ຍແມ່ນ $\mu$ =2.81 ຕາມລໍາດັບ.

**ອະພິປາຍຜົນຂອງການວິໄຈ**

ຜົນການວິໄຈ ປັດໄຈທີ່ສົ່ງຜົນຕໍ່ຜົນສໍາເລັດທາງດ້ານການຮຽນຂອງນັກສຶກສາ ສາຍຄູພູດທະສາສະໜາພາສາລາວ ປີທີ 4 ຂອງ ວິທະຍາໄລຄູສົງຈໍາປາສັກ ປະຈໍາສົກຮຽນ 2023-2024 ເຫັນວ່າປັດໃຈດ້ານຄອບຄົວ ແລະ ປັດໃຈດ້ານສະພາບແວດລ້ອມຂອງວິທະຍາໄລ ແມ່ນມີລະດັບຕໍ່າ ສົ່ງຜົນຕໍ່ຜົນສໍາເລັດທາງດ້ານການຮຽນຂອງນັກສຶກສາ ສາຍຄູພູດທະສາສະໜາພາສາລາວ ປີທີ 4 ໂດຍຄະແນນລວມ ສະເລ່ຍແມ່ນ 3.40 ແລະ ສາມາດອະພິປາຍຜົນການວິໄຈດັ່ງນີ້:

1) ປັດໃຈດ້ານຄອບຄົວ ເຫັນວ່າເປັນປັດໃຈທີ່ສົ່ງຜົນຕໍ່ຜົນສໍາເລັດທາງດ້ານການຮຽນຂອງນັກສຶກສາ ສາຍຄູພູດທະສາສະໜາພາສາລາວ ປີທີ 4 ແມ່ນຢູ່ໃນລະດັບດີ ອາດເປັນເພາະວ່າຍັງມີນັກສຶກສາບາງອົງແມ່ນມີຄວາມຫຍຸ້ງຍາກທາງດ້ານຄອບຄົວ, ບາງຄອບຄົວແມ່ນມີຄວາມຂັດສົນຂາດງົບປະມານໃນການທີ່ຈະສົ່ງເສີມລູກໃຫ້ພຽງພໍກັບຄວາມຮຽກຮ້ອງຕ້ອງການໃນການດໍາລົງຊີວິດໃນຕົວເມືອງ, ບາງອົງແມ່ນເປັນລູກກໍ້າພ້າພໍ່ຫຼືແມ່ ອາໄສມາບວດໃນວັດເພື່ອສົ່ງຕົນເອງໄດ້ເຂົ້າຮຽນໜັງສື ສະນັ້ນນັກສຶກສາຕ້ອງໄດ້ມີຄວາມພະຍາຍາມບຸກບືນໂດຍບໍ່ນໍາເອົາເລື່ອງທີ່ເກີດຂຶ້ນພາຍໃນຄອບຄົບມາເປັນ ບ່ອນອີງ ແລະ ບາງຄອບຄົວແມ່ນມັກເກີດມີບັນຫາເຊັ່ນ ບັນຫາຄວາມ

ສຳພັນໃນຄອບຄົວ ຫາກພໍ່ແມ່ແຍກທາງກັນ, ພໍ່ແມ່ລຸ້ມຫຼົງໃນອາບາຍຍະມຸກ, ພື້ນຖານດ້ານຄອບຄົວຂອງພໍ່ແມ່ບາງຄົນຂາດຄວາມເຂົ້າໃຈ, ຂາດຄວາມຮູ້ເລື່ອງຈິດຕະວິທະຍາກໍ່ອາດເຮັດໃຫ້ລູກເກີດຄວາມຂ້ອງໃຈ, ບາງຄອບຄົວຖານະເສດຖະກິດຍາກຈົນບໍ່ສາມາດຈັດຊື້ອຸປະກອນການຮຽນໄດ້ ເພາະສະນັ້ນ ພໍ່-ແມ່ນຕ້ອງໄດ້ເອົາໃຈໃສ່ເບິ່ງແຍງ, ໃຫ້ກຳລັງໃຈ ແລະ ຊ່ວຍເຫຼືອພ້ອມທັງສົ່ງເສີມໃຫ້ລູກໄດ້ມີການເຂົ້າຮຽນເປັນປົກກະຕິ ແລະ ທ່ອງທັນກັບເພື່ອນຮ່ວມງານເພາະວ່າກຳລັງໃຈແມ່ນສ່ວນໜຶ່ງທີ່ເຮັດໃຫ້ຜູ້ຮຽນໄດ້ມີກຳລັງໃຈໃນການຮຽນອັນເຮັດໃຫ້ຜົນການຮຽນໄດ້ຄະແນນເກດດີ ເຊິ່ງສອດຄ່ອງ ວະນິດາ ດີແປ້ນ (2553 ບົດຄັດຫຍໍ້) ປັດໃຈດ້ານຄອບຄົວແມ່ນແຮງເສີມຈາກບິດາມານດາ ຫຼື ຜູ້ປົກຄອງແຮງຈູງໃຈໃຝ່ສຳເດັດ ແລະ ນິໄສໃນການຮຽນຂອງນັກສຶກສາເປັນຕົ້ນ, ຄອບຄົວເປັນໝາກຫົວໃຈຫຼັກ ແລະ ເປັນກ້ອນກຳລັງໃຈອັນສຳຄັນທີ່ສຸດທີ່ຈະກະຕຸ້ນໃຫ້ລູກໄດ້ຮຽນໜັງສື.

2) ປັດໃຈດ້ານສະພາບແວດລ້ອມ ຂອງວິທະຍາໄລ ເຫັນວ່າເປັນປັດໃຈໜຶ່ງທີ່ສົ່ງຜົນຕໍ່ຜົນສຳເລັດທາງດ້ານການຮຽນຂອງນັກສຶກສາ ສາຍຄູພຸດທະສາສະໜາພາສາລາວ ປີທີ ເປັນອັນດັບທີ 2 ຮອງຈາກປັດໃຈດ້ານຄອບຄົວເນື່ອງຈາກວ່າ ວິທະຍາໄລຄູສົງຈຳປາສັກ ແມ່ນເປັນວິທະຍາໄລທີ່ຕັ້ງຢູ່ໃຈກາງນະຄອນປາກເຊ ເພາະສະນັ້ນຈຶ່ງຫຼີກລຽງບໍ່ໄດ້ຈາກສະພາບພາບນອກກະທົບໃສ່ໃນເວລາຮຽນເປັນຕົ້ນແມ່ນສຽງລົບກວນຈາກລົດແລ່ນໄປມາ, ສຽງດົນຕີ ແລະ ອື່ນໆ ສະພາບພາຍໃນວິທະຍາໄລແມ່ນບໍ່ມີຄວາມສະຫງົບປະສະຈາກສຽງລົບກວນຈາກພາບນອກອຸປະກອນການຮຽນບາງອັນຍັງບໍ່ພຽງພໍກັບຄວາມຕ້ອງການຂອງຄູ ແລະ ນັກຮຽນ, ສະຖານທີ່ການສຶກສາຄວນເປັນສະຖານທີ່ທີ່ຫ່າງໄກຈາກຊຸມຊົນ, ປາສະຈາກສຽງລົບກວນໃນເວລາຮຽນ ແລະ ເຮັດກິດຈະກຳຕ່າງໆ ເຊິ່ງສອດຄ່ອງກັບ (ນະພາພອນ ນິຕິພິລົມໄຊ, 2549) ໄດ້ເຮັດການວິໃຈ ປັດໃຈທີ່ສົ່ງຜົນຕໍ່ຜົນສຳເດັດທາງດ້ານການສຶກສາສາຂາບັນຊີເຫັນວ່າ ຄວາມສຳພັນລະຫວ່າງປັດໃຈດ້ານຕົວນັກສຶກສາ, ດ້ານວິທີການຮຽນຂອງນັກສຶກສາກັບຜົນສຳເລັດທາງການຮຽນເຫັນວ່າ ວິທີການຮຽນຂອງນັກສຶກສາໃນດ້ານການທົບທວນບົດຮຽນໄດ້ແກ່ ການຫາໜັງສືອ່ານເພີ້ມເຕີມນອກເໜືອຈາກອາຈານໃຫ້ໃນຊັ້ນຮຽນ, ການວາງແຜນການເບິ່ງແຍງໜັງສືເພື່ອກຽວສອບ ແລະ ການເຮັດບົດບັນທຶກຫຍໍ້ເພື່ອຊ່ວຍຄວາມຈຳ ແລະ ຄວາມສະດວກໃນການທົບທວນມີຜົນຕໍ່ຜົນສຳເລັດທາງດ້ານການຮຽນ ຢ່າງມີໃນຍະສຳຄັນທາງສະຖິຕິ ທີ່ລະດັບ 0.05 ແລະ ຄວາມສຳພັນໃນກຸ່ມເພື່ອນຂອງນັກຮຽນມີຜົນຕໍ່ທາງການຮຽນໄດ້ແກ່ການຮວມກຸ່ມເພື່ອນຊ່ວຍກັນທົບທວນບົດຮຽນມີຜົນຕໍ່ຜົນສຳເລັດທາງການຮຽນສາຂາບັນຊີຢ່າງມີໄນຍະສຳຄັນທາງສະຖິຕິທີ່ລະດັບ 0.05.

## ຂໍ້ສະເໜີແນະ

**ຂໍ້ສະເໜີແນະຜົນການວິໃຈ:**

1. ທາງວິທະຍາໄລຄູສົງຈຳປາສັກ ຄວນມີການແນະແນວກ່ຽວກັບຫຼັກສູດຂອງສາຍພຸດທະສາສະໜາ-ພາສາລາວ;
2. ຄອບຄົວຄວນສົ່ງເສີມ ແລະ ໃຫ້ກຳລັງໃຈແກ່ລູກຜູ້ຮຽນເພາະມັນເປັນປັດໃຈຫຼັກ;
3. ຄູ-ອາຈານ ສາຍພຸດທະສາສະໜາ ຄວນມີການພັດທະນາການສິດສອນລາຍວິຊາທີ່ຕົນຮັບຜິດຊອບຢ່າງຕໍ່ເນື່ອງ;
4. ວິທະຍາໄລຄູສົງຈຳປາສັກ ຄວນຂະຫຍາຍສັນຍານອິນເຕີເນັດ (ວາຍຟາຍ) ໃຫ້ນັກສຶກສາໄດ້ໃຊ້ນຳເພື່ອໃຊ້ເຂົ້າໃນການຮຽນ-ການສອນ.

**ຂໍ້ສະເໜີແນະໃນການວິໃຈຄັ້ງຕໍ່ໄປ:**

1. ຄວນເຮັດການວິໃຈກ່ຽວກັບການສົ່ງເສີມການຮຽນຮູ້ໃຫ້ແກ່ນັກສຶກສາສາຍອື່ນໆ.
2. ຄວນເຮັດການວິໃຈກ່ຽວກັບການສ້າງສື່ການຮຽນ-ການສອນເຂົ້າໃນຮູບແບບນາພາສ້າງສື່.

## ໃບກຽດຕິຄຸນ

ຜູ້ວິໄຈຂໍສະແດງຄວາມຮູ້ບຸນຄຸນມາຍັງ ຄະນະຜູ້ບໍລິຫານທັງໝົດຂອງວິທະຍາໄລຄູສິງຈຳປາສັກ ທີ່ໃຫ້ໂອກາດຂ້າພະເຈົ້າໄດ້ເຮັດການວິໄຈໃນຊັ້ນຮຽນ ໂດຍສະເພາະແມ່ນຫ້ອງຮຽນ ສາຍຄູພູດທະສາສະໜາ-ພາສາລາວ ປີທີ 4 ແລະ ອະນຸຍາດໃຫ້ຂ້າພະເຈົ້າ ລົງເກັບກຳຂໍ້ມູນເພື່ອນຳມາວິໄຈຈົນມີຜົນສຳເລັດ.

ຂໍສະແດງຄວາຮູ້ບຸນຄຸນມາຍັງ ພຣະອາຈານ ປທ. ຈໍາລອງ ມະຫາໄຊ ໃນນາມຄູທີ່ປຶກສາໃນການຂຽນບົດວິໄຈໃນຄັ້ງນີ້ທີ່ໄດ້ໃຫ້ຄຳແນະນຳສິດສອນຢ່າງດີ ແລະໃຫ້ຄວາມຊ່ວຍເຫຼືອ ຊີ້ນຳໃນການເຮັດບົດວິໄຈໃນຄັ້ງນີ້.

ຂໍສະແດງຄວາມຮູ້ບຸນຄຸນມາຍັງ ແລະ ຂອບໃຈມາຍັງນັກສຶກສາ ສາຍຄູພູດທະສາສະໜາ-ພາສາລາວ ທີ່ໄດ້ໃຫ້ການຮ່ວມມືປະກອບສ່ວນທາງດ້ານສະຕິປັນຍາ ແລະ ເຮື່ອແຮງໃນການຕອບແບບສອບຖາມ ຖືເປັນສ່ວນໜຶ່ງຂອງຂໍ້ມູນໃນການເຮັດວິໄຈຄັ້ງນີ້ ຈົນໄດ້ຮັບຜົນສຳເລັດ.

## ເອກະສານອ້າງອີງ

ກົມສ້າງຄູ ກະຊວງສຶກສາທິການ ແລະ ກິລາ. (2015). ຫຼັກສູດສ້າງຄູມັດທະຍົມ ສອນໄດ້ ມ.1-ມ.7 ສາຍວິຊາຄູພຸດທະສາສະໜາ-ພາສາລາວ. 2.

ນະພາພອນ ນິຕິພິລົມໄຊ. (2549). ປັດໃຈທີ່ສົ່ງຜົນຕໍ່ຜົນສຳເລັດທາງດ້ານການສຶກສາສາຂາບັນຊີ , 72.

ອະນິດາ ດີແປ້ນ. (2553). ປັດໃຈທີ່ສົ່ງຜົນຕໍ່ຜົນສຳເລັດທາງດ້ານການຮຽນພາສາອັງກິດຂອງນັກຮຽນຊັ້ນມັດທະຍົມປີທີ3. 20.

ທິດາສະນິກ ວົງພິທັກ. (2563). ປັດໃຈທີ່ສົ່ງຜົນສຳເລັດທາງການຮຽນຂອງນັກສຶກສາສາຂາບັນຊີ ຄະນະວິທະຍາການຈັດການ ມະຫາວິທະຍາໄລລາຊະພັດອຸບົນລາດຊະທານີ. 22.